ສົ່ງ: ທ່ານ ຫົວໜ້າສໍານັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 04 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 23 JAN 2015

**ລາຍງານການເຄື່ອນໄຫວປະຈໍາອາທິດ**

**12/01/2015 ຫາ 16/01/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ ແລະ ໃນອາທິດນີ້ ສໍາເລັດກອງປະຊຸມທາບທາມບຸກຄະລາກອນອອກຮັບສະໝັກເລືອກຕັ້ງຄະນະພັກ ທຫລ ຊຸດໃໝ່ ຮອບ ທີ່ I.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຍອດຂາດດຸນການຄ້າຂອງສະຫະລັດຫຼຸດລົງຈາກ 42,2 ຕື້ໂດລາ ໃນເດືອນ 10/2014 ເປັນ 39 ຕື້ໂດລາ ໃນເດືອນ 11/2014 ແລະ ຕົວເລກການຈ້າງງານພາກເອກະຊົນເພີ່ມຂຶ້ນ ຈາກ 227.000 ຄົນ ໃນເດືອນ 11/2014 ເປັນ 241.000 ຄົນ ໃນເດືອນ 12/2014. ໃນຂະນະທີ່, ຕົວເລກທາງດ້ານເສດຖະກິດຂອງເຢຍລະມັນອອກມາບໍ່ດີ ເປັນຕົ້ນແມ່ນຍອດສັ່ງຊື້ສິນຄ້າໂຮງງານຫຼຸດລົງຈາກ 2,9% ໃນເດືອນ 10/2014 ເປັນ -2,4% ໃນເດືອນ 11/2014 ບວກກັບປະທານທະນາຄານກາງເອີຣົບ (ECB) ໃຫ້ຮູ້ວ່າພ້ອມທີ່ຈະໃຊ້ມາດຕະການຜ່ອນຄາຍທາງດ້ານການເງິນ (QE) ເພື່ອກະຕຸ້ນເສດຖະກິດຂອງຊີງເຂດ. ສ່ວນຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນດັດຊະນີພາກການບໍລິການຂອງ ສປ. ຈີນ ເພີ່ມຂຶ້ນຈາກ 53 ໃນເດືອນ 11/2014 ເປັນ 53,4 ໃນເດືອນ 12/2014.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 06/01/2015 | ອາທິດນີ້ 13/01/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,1941 | 1,1833 | 0,91% |
| ໂດລາ/ເຢນ | 119,11 | 118,24 | 0,73% |
| ໂດລາ/ບາດ | 32,92 | 32,84 | 0,22% |
| ໂດລາ/ເປໂຊ | 44,97 | 44,81 | 0,36% |
| ໂດລາ/ຣູເປັຍ | 12643,89 | 12596,89 | 0,37% |
| ໂດລາ/ໂດລາສິງກະໂປ | 1,3328 | 1,3350 | -0,16% |
| ໂດລາ/ຢວນ | 6,2135 | 6,2008 | 0,20% |

### 1.2 ສະພາບລາຄານໍ້າມັນ ແລະ ຄໍາໃນຕະຫຼາດໂລກ

ລາຄານໍ້າມັນໃນຕະຫຼາດໂລກຫຼຸດລົງ 9,56% ຈາກ 49,85 ໂດລາ/ບາເຣວ ມາເປັນ 45,08 ໂດລາ/ບາເຣວ ຍ້ອນນັກລົງທຶນມີຄວາມເຊື່ອໝັ້ນຕໍ່ການສະໜອງນໍ້າມັນຈາກກຸ່ມປະເທດຜູ້ສົ່ງອອກນໍ້າມັນ (OPEC) ບວກກັບປະເທດ ສະຫະລັດ ອາຣັບ ອີມີເຣດ ຈະຍັງຮັກສາລະດັບການຜະລິດນໍ້າມັນ 3 ລ້ານບາເຣວ/ວັນ ແລະ ຈະເພີ່ມຂຶ້ນ ເປັນ 3.5 ລ້ານບາເຣວ/ວັນ ໃນປີ 2017 ແລະ ອີຣັກ ໄດ້ປັບຫຼຸດລາຄາຂາຍສົ່ງນໍ້າມັນໄປໃຫ້ຂົງເຂດອາຊີ ເພື່ອຍາດສ່ວນແບ່ງທາງການຕະຫຼາດໃນຂົງເຂດດັ່ງກ່າວ;

ລາຄາຄໍາໃນຕະຫຼາດໂລກເພີ່ມຂຶ້ນ 2,47% ຈາກ 1.207,23 ໂດລາ/ອອນ ມາເປັນ 1.237,07 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອເກງກໍາໄລ ແລະ ປ້ອງກັນຄວາມສ່ຽງ ຈາກຄວາມບໍ່ແນ່ນອນຂອງເສດຖະກິດໂລກ ບວກກັບການອ່ອນຄ່າຂອງເງິນໂດລາໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,17% ສໍາລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,15% ສໍາລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,47% ສໍາລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,07% ສໍາລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,33% ສໍາລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,30% ສໍາລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,33% ສໍາລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,98% ສໍາລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 31/12/2014-06/01/2015 | | | ອາທິດນີ້ 07-13/01/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.080,50 | 8.114,96 | 8.091,22 | 8.092,17 | 8.124,63 | 8.104,83 | -0,14% | -0,12% | -0,17% |
| ບາດ | 246,70 | 247,89 | 247,43 | 247,86 | 249,09 | 248,59 | -0,47% | -0,48% | -0,47% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.101,08 | 8.145,67 | 8.123,38 | 8.112,68 | 8.158,60 | 8.135,64 | -0,14% | -0,16% | -0,15% |
| ບາດ | 248.08 | 249,93 | 249,00 | 248,13 | 250,21 | 249,17 | -0,02% | -0,11% | -0,07% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,25% | 0,38% | 0,40% | 0,25% | 0,42% | 0,38% | | | |
| ບາດ | 0,56% | 0,83% | 0,64% | 0,11% | 0,45% | 0,23% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈໍາອາທິດນີ້ ເພີ່ມຂຶ້ນ 1,79% ທຽບໃສ່ວັນທີ 09/01/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 56,02%.
- ປະລິມານເງິນ $M_2$ ຫຼຸດລົງ 0,22% ເມື່ອທຽບໃສ່ວັນທີ 09/01/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 25,01%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈໍາອາທິດ (ວັນທີ 07-13/01/2015) ເຫັນວ່າ ທທກ ຂາຍໂດລາສຸດທິ 6,66 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 4,93 ລ້ານໂດລາ ແລະ ຂາຍໂດລາໄດ້ 11,59 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 6,01 ລ້ານບາດ (ໃນນີ້ ຊື້ບາດໄດ້ 28,50 ລ້ານບາດ ແລະ ຂາຍບາດ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

ໄດ້ 34,50 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 45,42% ແລະ ເພີ່ມຂຶ້ນ 165,18% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 1,31 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 3,11 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈໍານວນ 4,15 ລ້ານໂດລາ ແລະ ຊື້ບາດສຸດທິ ຈໍານວນ 5,16 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 0,29 ລ້ານໂດລາ ແລະ ຂາຍບາດໄດ້ສຸດທິ ຈໍານວນ 0,85 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 30/12/2014-06/01/2015 | | ອາທິດນີ້ 07-13/01/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 10,45 | 33,97 | 2,34 | 11,66 | 10,45 | 33,97 |
| - ທ/ຄທຸລະກິດອື່ນໆ | 8,29 | 53,03 | 2,59 | 16,84 | 8,29 | 53,03 |
| ລວມຊື້: | 18,74 | 87,00 | 4,93 | 28,50 | 18,74 | 87,00 |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 7,08 | 30,04 | 2,88 | 14,99 | 7,08 | 30,04 |
| - ທ/ຄທຸລະກິດອື່ນໆ | 19,60 | 48,14 | 8,72 | 19,51 | 19,60 | 48,14 |
| ລວມຂາຍ: | 26,68 | 78,18 | 11,59 | 34,50 | 26,68 | 78,18 |
| ຊື້-ຂາຍສຸດທິ ທທກ | -7,94 | 8,82 | -6,66 | -6,01 | -7,94 | 8,82 |
| ຜິດດ່ຽງ ຊື້-ຂາຍ | -42,37 | 10,14 | -135,15 | -21,07 | -42,37 | 10,14 |
| ມູນຄ່າການຊື້-ຂາຍ | 45,42 | 165,18 | 16,52 | 63,00 | 45,42 | 165,18 |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 3,05 | 21,65 | 4,15 | 6,15 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 3,40 | 0,00 | 0,99 | | |
| ຊື້-ຂາຍສຸດທິ ທຫລ | 3,05 | 18,25 | 4,15 | 5,16 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 4,66 | 26,18 | 1,31 | 3,11 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 7,76 | 8,28 | 0,15 | 0,21 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,01 | 8,22 | 0,45 | 1,05 | | |
| ຊື້-ຂາຍສຸດທິ ທຫລ | 7,75 | 0,06 | -0,29 | -0,85 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 01/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,20% ຫຼຸດລົງ 0,20% ຈາກ 2,40% ໃນເດືອນ 12/2014.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 55,65 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 1,28% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 777 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 114,05% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 396,38 ຕື້ກີບ ເພີ່ມຂຶ້ນ 80,51% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (09-15/01/2015) ມີຈຳນວນ 1.122 ຄັ້ງ ໂດຍມີມູນຄ່າ 729,5 ຕື້ກີບ ເພີ່ມຂຶ້ນ 303,48 ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 345 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.413,99 ຈຸດ ຫຼຸດລົງ 0,62% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 3,59 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 21,66 ຕື້ກີບ ເພີ່ມຂຶ້ນ 372,15% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 46,74% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດທີ່ພາໃຫ້ມູນຄ່າການຊື້-ຂາຍເພີ່ມຂຶ້ນ ເນື່ອງຈາກໃນຕົ້ນອາທິດມີຜູ້ລົງທຶນປະເພດສະຖາບັນຈາກປະເທດອາເມລິກາເຂົ້າມາເກັບຊື້ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເປັນຈຳນວນຫຼາຍ ແລະ ຜູ້ຂາຍແມ່ນຜູ້ລົງທຶນປະເພດສະຖາບັນຈາກປະເທດໄທ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.016 ກີບ/ຮຸ້ນ ຫຼຸດລົງ 396 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 24.925 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 174,86 ລ້ານກີບ ເພີ່ມຂຶ້ນ 654,73% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 20,04% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,52%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.049 ກີບ/ຮຸ້ນ ເພີ່ມຂຶ້ນ 23 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2,28 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 16,07 ຕື້ກີບ ເພີ່ມຂຶ້ນ 676,36% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 75,83% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,26%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.850 ກີບ/ຮຸ້ນ ເພີ່ມຂຶ້ນ 750 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.160 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 9,91 ລ້ານກີບ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.183 ກີບ/ຮຸ້ນ ເພີ່ມຂຶ້ນ 192 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,29 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,41 ຕື້ກີບ ຫຼຸດລົງ 117,76% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 23,18% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,70%[5].

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສໍາເລັດການຈັດກອງປະຊຸມປຶກສາຫາລື ກ່ຽວກັບການຮັບ-ສົ່ງຂໍ້ມູນລາຍງານທາງການເງິນກັບສາຂາພາກ (MIS ສາຂາ) ແລະ ທະນາຄານທຸລະກິດ ທີ່ມີສາຂາ ແລະ ໜ່ວຍບໍລິການທີ່ຂຶ້ນກັບສາຂາພາກ;
- ສໍາເລັດການຮ່າງແຜນຍຸດທະສາດ ການພັດທະນາຂີດຄວາມສາມາດໂດຍພື້ນຖານ;
- ສໍາເລັດການຮ່າງລະບຽບການບໍລິການດ້ານການເງິນໂດຍບໍ່ຜ່ານສາຂາທະນາຄານ ແລະ ການບໍລິການດ້ານການເງິນໂດຍຜ່ານມືຖື ໂດຍຜ່ານການປະກອບຄໍາເຫັນຈາກຄະນະຮັບຜິດຊອບເປັນທີ່ຮຽບຮ້ອຍແລ້ວ;
- ສໍາເລັດການອອກໃບອະນຸຍາດຖາວອນ ໃຫ້ແກ່ ສສງ ເຂດປາກທອນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT, ❷ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາ ຄານຕາມຫຼັກການບາແຊວ 2, ❸ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ໃນແຕ່ລະ Pillar ໂດຍລົງເລິກບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2 ເພື່ອເປັນໝາກຜົນໃນການລາຍງານກອງປະຊຸມຄົບຄະນະບາແຊວ 2 ຄັ້ງທີ V, ❹ ຄົ້ນຄວ້າຄູ່ມືກ່ຽວກັບຄວາມໂປ່ງໃສ ແລະ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ (Guidance On Transparency and Beneficial Ownership), ❺ ສືບຕໍ່ຄົ້ນຄວ້າການປະກອບຂໍ້ມູນໃສ່ບົດລາຍງານຄວາມຄືບໜ້າ (Progress Report) ເພື່ອນໍາສົ່ງກຸ່ມ APG; ❻ ຄົ້ນຄວ້າຄູ່ມືຫຼັກການປະເມີນຄວາມສ່ຽງສໍາລັບຂະແໜງການທະນາຄານ (Risk-Based approach Guidance For The Banking Sector), ❼ ສືບຕໍ່ຄົ້ນຄວ້າຮ່າງລະບຽບ RTGS ວ່າດ້ວຍ: ລະບົບຊໍາລະສະສາງມູນຄ່າ (RTGS) ໃນລະບົບແຫ່ງຊາດ ແລະ ລະບຽບເງິນເອເລັກໂທຣນິກ, ❽ ສືບຕໍ່ຄົ້ນຄວ້າອອກແບບບົດແນະນໍາ ການຕີມູນຄ່າເງິນຕາຕ່າງປະເທດ ສໍາລັບ ທຫລ ໃຫ້ສໍາເລັດ, ❾ ສືບຕໍ່ຄົ້ນຄວ້າການເຂົ້າເປັນສະມະຊິກ AFI (Alliance Financial Inclusion) ມູນລະນິທິ ເພື່ອການເຂົ້າເຖິງແຫຼ່ງທຶນທີ່ທົ່ວເຖິງ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ຫ້ອງການ ທະນາຄານແຫ່ງ ສປປ ລາວ

ພາສີ ພົມມະກອນ